**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະຄອນຫຼວງວຽງຈັນ

ພະແນກສາທາລະນະສຸກ

ເລກທີ 378 /ພສທ

ວັນທີ 10 ພຶດສະພາ 2021

# ແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນຊາວນະຄອນຫຼວງວຽງຈັນ ແລະ ການຈັດຕັ້ງ ທຸກພາກສ່ວນ ທັງພາກລັດ ແລະ ເອກະຊົນ.

**ເລື່ອງ:** ການອະນຸຍາດເອກະສານ ເດີນທາງເຂົ້າ -ອອກ ນະຄອນຫຼວງວຽງຈັນ ແຕ່ນີ້ເຖິງວັນທີ 20 ພຶດສະພາ 2021.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ຄຳສັ່ງ ຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ເລກທີ 006/ຈນຂ, ລົງວັນທີ 22 ເມສາ 2021;
- ອີງຕາມ ທິດຊີ້ນຳຂອງຫົວໜ້າຄະນະສະເພາະກິດ ນະຄອນຫຼວງວຽງຈັນ ຄັ້ງວັນທີ 8 ພຶດສະພາ 2021.

ຫົວໜ້າພະແນກສາທາລະນະສຸກນະຄອນຫຼວງວຽງຈັນ, ໃນນາມຄະນະສະເພາະກິດ ເພື່ອສະກັດກັ້ນ,ຄວບຄຸມ ແລະ ແກ້ໄຂໂຄວິດ-19,ຂໍແຈ້ງມາຍັງບັນດາທ່ານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຮັບຊາບ ກ່ຽວກັບການປະກອບເອກະສານ ຂໍອະນຸຍາດ ເດີນທາງເຂົ້າ-ອອກ ນະຄອນຫຼວງວຽງຈັນ, ລາຍລະອຽດດັ່ງນີ້ :

## I. ການປະກອບເອກະສານ:

1. ພະນັກງານໄປວຽກທາງລັດຖະການຢູ່ຕ່າງແຂວງ: ໃບອະນຸຍາດຢັ້ງຢືນ ຫຼື ໃບແຕ່ງຕັ້ງ ຈາກກົມກອງ
2. ນິຕິບຸກຄົນ ຫຼື ບໍລິສັດເອກະຊົນ ໃຫ້ເຮັດ ໃບສະເໜີຈາກບໍລິສັດ
3. ບຸກຄົນ ຫຼື ປະຊາຊົນທົ່ວໄປ ແມ່ນໃຫ້ເຮັດ ໃບສະເໜີຜ່ານນາຍບ້ານ; ກໍລະນີມີຍາດພີ່ນ້ອງເຈັບເປັນ ຕ້ອງມີໃບຢັ້ງຢືນຈາກໂຮງໝໍ ຫຼື ຖ້າຄົນເຈັບຢູ່ເຮືອນ ແມ່ນໃຫ້ມີໃບຢັ້ງຢືນຈາກນາຍບ້ານ.
4. ຄົນຕ່າງແຂວງທີ່ມາຄ້າງຢູ່ນະຄອນຫຼວງວຽງຈັນ ຢາກກັບຄືນຖິ່ນຖານ ຕ້ອງມີ ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໃບຢັ້ງຢືນທີ່ຢູ່ ຈາກປົກຄອງທ້ອງຖິ່ນ (ບ້ານ,ເມືອງ ຫຼື ແຂວງ).
5. ສຳລັບຊາວຕ່າງປະເທດ ທີ່ເຂົ້າມາ ສປປ ລາວ ທີ່ອາໄສຢູ່ນະຄອນຫຼວງວຽງຈັນ ພາຍໃນ 01 ເດືອນ ໃຫ້ມີໃບຢັ້ງຢືນ ກວດໂຄວິດ-19 ຈາກສູນວິເຄາະລະບາດວິທະຍາ.

## II. ເງື່ອນໄຂທີ່ອະນຸຍາດ :

1. ບຸກຄົນ,ນິຕິບຸກຄົນ ພົນລະເມືອງລາວ ແລະ ຊາວຕ່າງປະເທດ ທີ່ຈະເດີນທາງອອກໄປຕ່າງແຂວງ ທຸກຄົນຈະຕ້ອງໄດ້ຮັບການຢັ້ງຢືນຈາກ ການປົກຄອງທ້ອງຖິ່ນ (ບ້ານ,ເມືອງ ຫຼື ແຂວງ) ປາຍທາງ; ສ່ວນການເຂົ້າມານະຄອນຫຼວງວຽງຈັນ ຈະຕ້ອງມີອະນຸຍາດ ຈາກສະເພາະກິດແຂວງກ່ຽວຂ້ອງກ່ອນ.
2. ຂະບວນລົດຜູ້ນຳ, ລົດແພດສົ່ງຄົນເຈັບ, ລົດກູ້ໄພ, ລົດດັບເພີງ ແລະ ລົດຄະນະສະເພາະກິດ ສາມາດເຂົ້າ-ອອກ ໄດ້ເລີຍ .
3. ຄົນຂັບລົດ ຂົນສົ່ງສິນຄ້າ ແມ່ນໃຫ້ຜ່ານ ອະນຸຍາດຈາກພະແນກໂຍທາທິການ ແລະ ຂົນສົ່ງ (ຍທຂ), ຖ້າມີບຸກຄົນອື່ນໄປນຳລົດດັ່ງກ່າວ ຕ້ອງໄດ້ມາຜ່ານພະແນກສາທາລະນະສຸກນະຄອນຫຼວງວຽງຈັນ.
4. ສະຖານທີ່ພິຈາລະນາເອກະສານ ຢູ່ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ , ສົ່ງເອກະສານ ຜ່ານທາງ WhaApp 020 59194224, 02076280640 (ບໍ່ຮັບການຍື່ນເອກະສານ ໂດຍກົງ).

**ໝາຍເຫດ:** ເນື້ອໃນເອກະສານຈະຕ້ອງແຈ້ງຈຸດປະສົງເຫດຜົນຄວາມຈຳເປັນ, ສະຖານທີ່, ປະເພດພາຫະນະ,ເລກທະບຽນ, ຊື່ຜູ້ຂັບລົດ, ເບີໂທລະສັບ, ຈຳນວນຄົນທີ່ຈະເດີນທາງຮ່ວມ, ກຳນົດວັນທີ ໄປ ແລະ ກັບ ຢ່າງຈະແຈ້ງ, ພ້ອມຕິດຄັດເອກະສານໃຫ້ຄົບຖ້ວນຕາມທີ່ໄດ້ລະບຸຢູ່ຂ້າງເທິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ເຊັນແທນ **ຫົວໜ້າພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ**

ດຣ.ບຸນທະວີ ເດດບັນດິດ

CS ສແກນດ້ວຍ CamScanner